ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ກົມສ່ວຍສາອາກອນ

0992

ເລກທີ............../ກສອ

ນະຄອນຫຼວງວຽງຈັນ, ລົງວັນທີ 30 MAR 2020

# ແຈ້ງການ

ເຖິງ : ທົ່ວໜ້າສ່ວຍສາອາກອນປະຈຳ ແຂວງ, ນະຄອນຫລວງວຽງຈັນ, ສ່ວຍສາອາກອນປະຈຳ ນະຄອນ, ເມືອງ ໃນຂອບເຂດທົ່ວປະເທດ

ເລື່ອງ : ການອອກເລກປະຈຳຕົວຜູ້ເສຍອາກອນໃຫ້ ວິສາຫະກິດທີ່ມີ ສາຂາ, ຕົວແທນ, ສາງ, ໂຮງງານ, ປໍ້ານໍ້າມັນ ແລະ ບັນດາໂຄງການຕ່າງໆ ລວມທັງຜູ້ຮັບເໝົາຫລັກ ແລະຜູ້ຮັບເໝົາຊ່ວງຕໍ່.

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນສະບັບປັບປຸງ ສະບັບເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
- ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 2834/ກງ, ລົງວັນທີ 22 ສິງຫາ 2017 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມສ່ວຍສາອາກອນ.

ເພື່ອເຮັດໃຫ້ການອອກເລກປະຈຳຕົວຜູ້ເສຍອາກອນ ໄດ້ຖືກຈັດຕັ້ງປະຕິບັດຢ່າງເປັນເອກະພາບກັນໃນຂອບເຂດທົ່ວປະເທດ ແລະທັງຮັບປະກັນການຄຸ້ມຄອງຫົວໜ່ວຍທຸລະກິດໃຫ້ຢູ່ໃນຖານຂໍ້ມູນການເກັບລາຍຮັບ ໄດ້ຢ່າງຖືກຕ້ອງ, ຄົບຖ້ວນ ແລະ ສາມາດຕິດຕາມໄດ້ການເຄື່ອນໄຫວຂອງທຸກຫົວໜ່ວຍທຸລະກິດ, ເນື່ອງຈາກວ່າໃນໄລຍະຜ່ານມາ ການອອກເລກປະຈຳຕົວຜູ້ເສຍອາກອນໃຫ້ບັນດາວິສາຫະກິດຂອງບັນດາສ່ວຍສາອາກອນປະຈຳແຂວງ, ນະຄອນຫລວງ ຍັງບໍ່ເປັນເອກະພາບກັນໃນຂອບເຂດທົ່ວປະເທດ ຊຶ່ງເຮັດໃຫ້ຂໍ້ມູນຂອງວິສາຫະກິດບໍ່ລວມສູນ ຫລື ມີກໍ່ຊໍ້າຊ້ອນກັນ.

## ກົມສ່ວຍສາອາກອນ ອອກແຈ້ງການ ດັ່ງນີ້:

1. ການອອກເລກປະຈຳຕົວຜູ້ເສຍອາກອນໃຫ້ ບຸກຄົນ, ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດສ້າງຕັ້ງວິສາຫະກິດ ແມ່ນໃຫ້ປະຕິບັດຕາມແຈ້ງການຂອງຫ້ອງການກະຊວງການເງິນ ສະບັບເລກທີ 0489/ຫກງ, ລົງວັນທີ 05 ມີນາ 2019, ສໍາລັບວິສາຫະກິດໃດທີ່ມີ ສາຂາ, ຕົວແທນຈຳໜ່າຍ, ສາງ, ໂຮງງານ, ປໍ້ານໍ້າມັນ ທີ່ໄດ້ລະບຸໄວ້ດ້ານຫລັງຂອງໃບທະບຽນວິສາຫະກິດ ແມ່ນນຳໃຊ້ເລກປະຈຳຕົວຜູ້ເສຍອາກອນອັນດຽວກັບບໍລິສັດແມ່ ພຽງແຕ່ກຳນົດຍ່ອຍລຽງລຳດັບຂອງ ສາຂາ, ຕົວແທນຈຳໜ່າຍ, ສາງ, ປໍ້ານໍ້າມັນ ທີ່ໄດ້ລະບຸໄວ້ດ້ານຫລັງຂອງໃບທະບຽນດັ່ງກ່າວ.

2. ການອອກເລກປະຈຳຕົວໃຫ້ຂະແໜງການຂອງລັດ, ໂຄງການ, ອົງການຈັດຕັ້ງສາກົນທີ່ຂຶ້ນກັບລັດຖະບານ ແລະ ບໍ່ຂຶ້ນກັບລັດຖະບານ ລວມທັງ ຜູ້ຮັບເໝົາຫລັກ ແລະ ຜູ້ຮັບເໝົາຊ່ວງຕໍ່ ທີ່ບໍ່ມີພູມລຳເນົາ ແລະບໍ່ໄດ້ສ້າງຕັ້ງ ຢູ່ ສປປ ລາວ ມາເຄື່ອນໄຫວໃນບັນດາໂຄງການຕ່າງໆ ແມ່ນໃຫ້ປະຕິບັດດັ່ງນີ້ :

- ຂະແໜງການຂອງລັດ, ອົງການຈັດຕັ້ງສາກົນ ທີ່ຂຶ້ນກັບລັດຖະບານ ແລະ ບໍ່ຂຶ້ນກັບລັດຖະບານ ແມ່ນໃຫ້ອອກເລກປະຈຳຕົວຜູ້ເສຍອາກອນ ສະເພາະຂອງໃຜລາວ ( ກໍລະນີຜ່ານມາຍັງບໍ່ທັນມີເລກປະຈຳຕົວຜູ້ເສຍອາກອນ ), ແຕ່ໃນກໍລະນີມີຂະແໜງການຍ່ອຍ ໃນຂະແໜງການຂອງລັດ, ອົງການຈັດຕັ້ງສາກົນ ທີ່ຂຶ້ນກັບລັດຖະບານ ແລະ ບໍ່ຂຶ້ນກັບລັດຖະບານ ແມ່ນໃຫ້ໃຊ້ເລກປະຈຳຕົວຜູ້ເສຍອາກອນອັນດຽວກັບບໍລິສັດແມ່ ພຽງແຕ່ກຳນົດຍ່ອຍລຽງລຳດັບ;
- ສຳລັບ ໂຄງການ ແມ່ນໃຫ້ປະຕິບັດການອອກເລກປະຈຳຕົວຜູ້ເສຍອາກອນ ຄືກັນກັບ ບຸກຄົນ, ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດສ້າງຕັ້ງວິສາຫະກິດ; ກໍລະນີ ວິສາຫະກິດທີ່ສ້າງຕັ້ງຢູ່ ສປປ ລາວ ໄດ້ເຄື່ອນໄຫວໃນນາມເຈົ້າຂອງໂຄງການແມ່ນໃຫ້ນຳໃຊ້ເລກປະຈຳຕົວຜູ້ເສຍອາກອນຂອງວິສາຫະກິດນັ້ນເລີຍ;
- ບຸກຄົນ, ນິຕິບຸກຄົນ ທີ່ບໍ່ມີພູມລຳເນົາ ແລະບໍ່ໄດ້ສ້າງຕັ້ງ ຢູ່ ສປປ ລາວ ເຖິງວ່າຈະເປັນຜູ້ຮັບເໝົາຫລັກ ຫລື ຮັບເໝົາຊ່ວງຕໍ່ ທີ່ມາເຄື່ອນໄຫວໂຄງການໃດໜຶ່ງ ຫລື ຫລາຍໂຄງການ ຢູ່ ສປປ ລາວ ເປັນເວລາ 3 ເດືອນຂຶ້ນໄປ ( ອີງຕາມສັນຍາທີ່ໄດ້ກຳນົດແຕ່ມື້ເລີ່ມຕົ້ນຈົນຮອດມື້ສຳເລັດ ) ແມ່ນໃຫ້ອອກເລກປະຈຳຕົວຜູ້ເສຍອາກອນ ອັນດຽວກັບວິສາຫະກິດທີ່ໄດ້ຮັບອະນຸຍາດສ້າງຕັ້ງທົ່ວໄປ;
- ສຳລັບ ບຸກຄົນ, ນິຕິບຸກຄົນ ທີ່ບໍ່ມີພູມລຳເນົາ ແລະບໍ່ໄດ້ສ້າງຕັ້ງ ຢູ່ ສປປ ລາວ ເປັນຜູ້ຮັບເໝົາຫລັກ ຫລື ຮັບເໝົາຊ່ວງຕໍ່ທີ່ມາເຄື່ອນໄຫວໃນບັນດາໂຄງການຕ່າງໆ ຢູ່ ສປປ ລາວ ບໍ່ເກີນ 6 ເດືອນ ແມ່ນໃຫ້ນຳໃຊ້ເລກປະຈຳຕົວຜູ້ເສຍອາກອນຂອງໂຄງການທີ່ມາເຄື່ອນໄຫວຜູ້ຮັບເໝົາຫລັກ ຫລື ຮັບເໝົາຊ່ວງຕໍ່.
- ສະເພາະການອອກເລກປະຈຳຕົວຜູ້ເສຍອາກອນສຳລັບບຸກຄົນ ແມ່ນກຳນົດເອົາຕົວອັກສອນ P ຢູ່ທາງໜ້າຂອງເລກປະຈຳຕົວຜູ້ເສຍອາກອນ(ໃນລະບົບ Taxris) ຈົນກວ່າຈະມີການປ່ຽນແປງລະບຽບການໃຫມ່.

3. ຂະແໜງທະບຽນ ແລະຄຸ້ມຄອງວິສາຫະກິດ ( ກະຊວງອຸດສາຫະກຳ ແລະການຄ້າ ) ຈະບໍ່ສົ່ງສຳນວນຊຸດຄຳຮ້ອງແຈ້ງຂຶ້ນທະບຽນ ແລະ ປ່ຽນແປງເນື້ອໃນທະບຽນວິສາຫະກິດໃຫ້ຂະແໜງສ່ວຍສາອາກອນ ພາຍຫລັງທີ່ໄດ້ມີການເຊື່ອມຕໍ່ລະບົບກັນໃນຂອບເຂດທົ່ວປະເທດ. ແຕ່ທຸກທ້າຍເດືອນເຈົ້າໜ້າທີ່ທະບຽນວິສາຫະກິດ ຈະສະຫລຸບສັງລວມສະຖິຕິຫົວໜ່ວຍທີ່ໄດ້ແຈ້ງ ຂຶ້ນໃໝ່ ແລະປ່ຽນແປງເນື້ອໃນ ໃຫ້ຂະແໜງສ່ວຍສາອາກອນ ເພື່ອສົມທຽບ ແລະກວດຄືນ ຕາມຊຸດສຳນວນຂອງວິສາຫະກິດທີ່ແຈ້ງຕໍ່ເຈົ້າໜ້າທີ່ສ່ວຍສາອາກອນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະຈັດຕັ້ງປະຕິບັດ.

ຫົວໜ້າກົມ

ສຸທະນຸພັດ ໄຊສົມບັດ